Australian Government
Australian Centre for International Agricultural Research

# ໂຄງການ ເຜີຍແຜ່ວິທີການທີ່ເໝາະສົມໃນ ການຂະຫຍາຍ ການລ້ຽງສັດ ເຂດພາກເໜືອ ຂອງ ສປປລາວ



***ຄອບຄົວທີ່ໄດ້ຮັບຜົນປະໂຫຍດຈາກການປູກຖົ່ວ ສະໄຕໂລນຳໃຊ້ລ້ຽງໝູ.***

ຈັດຕັ້ງປະຕິບັດໂດຍ ກອງສົ່ງເສີມກະສິກຳ ແລະ ປ່າໄມ້
ກະຊວງກະສິກຳ ແລະ ປ່າໄມ້ ສ ປ ປ ລາວ

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ ກ.ສ.ກ.ປ NAFES

Charles Sturt University
INSTITUTE FOR LAND, WATER AND SOCIETY

ນາງ ໃບ ເປັນຊາວກະສິກອນຄອບຄົວໜຶ່ງ ທີ່ດຳລົງຊີວິດຢູ່ບ້ານ ດອນໄຊ ເມືອງໂພນໄຊ ແຂວງ ຫຼວງພະບາງ, ເປັນຊົນເຜົ່າຂະມຸ ຈຳນວນພົນໃນຄອບຄົວມີ 5 ຄົນ, ມີຍິງ 2 ຄົນ, ມີແຮງງານຕົ້ນຕໍ 3 ຄົນ, ອາຊີບຕົ້ນຕໍຂອງລາວແມ່ນເຮັດໄຮ່ປູກເຂົ້າ ຄຽງຄູ່ໄປກັບການລ້ຽງສັດ ພ້ອມນັ້ນ ລາວກໍໄດ້ປູກພືດເປັນສິນຄ້າ ໂດຍສະເພາະແມ່ນໝາກງາ ປູກໃນເນື້ອທີ່ 1 ເຮັກຕາ ໃນຄອບຄົວຂອງລາວປະຈຸບັນ ມີຄວາຍ 5 ໂຕ, ແບ້ 15 ໂຕ, ໝູ 4 ໂຕ, ສັດປີກ 48 ໂຕ.



ສະພາບການລ້ຽງສັດຂອງລາວ ໃນເມື່ອກ່ອນ ແມ່ນພົບບັນຫາຫຍຸ້ງຍາກຫຼາຍ ຍ້ອນລ້ຽງປ່ອຍແບບທຳມະຊາດບໍ່ມີຄອກໃຫ້ໝູນອນ ນອນຕາມດິນ, ມີບັນຫາໝູເປັນພະຍາດແລ້ວຕາຍ ເຮັດໃຫ້ເສດຖະກິດຄອບຄົວ ພົບຄວາມຫຍຸ້ງຍາກ ດ້ານອາຫານກໍ່ໄປຊອກຫາໄກ ໃຊ້ເວລາໄປກັບປະມານ 3 ຊົ່ວໂມງ ພ້ອມກັນນັ້ນ ກໍເສັຍເວລາມາຕົ້ມອີກ ລາຄາຊື້ຮຳກໍ່ແພງ 1 ກະໂລ່ງຕໍ່ 4,000 ກີບ ກຸ້ມພຽງແຕ່ 1 ວັນ ໃຊ້ເວລາລ້ຽງເຄິ່ງປີຈິ່ງໄດ້ຂາຍໝູ, ໝູຈ່ອຍລ້ຽງນານໃຫຍ່ ຂາຍໄດ້ລາຄາຕໍ່າ

ດັ່ງນັ້ນເມື່ອ ມາຮອດປີ 2006 ລາວໄດ້ສະມັກໃຈເຂົ້າຮ່ວມໂຄງການກໍ່ສ້າງບຸກຄະລາກອນ ລາວໄດ້ສະເໜີປູກຖົ່ວສະໄຕໂລລ້ຽງໝູ ເພື່ອແກ້ໄຂບັນຫາຂາດແຄນອາຫານ ປູກປີທຳອິດ ມີເນື້ອທີ່ 400 ຕາແມັດ ຫຼັງຈາກລາວໄດ້ເຂົ້າຮ່ວມໂຄງການແລ້ວ ລາວກໍ່ໄດ້ມີວິທີການປັບປຸງ ການລ້ຽງໝູແບບທຳມະຊາດ ມາລ້ຽງແບບນຳໃຊ້ເຕັກນິກຄື: ລາວໄດ້ສ້າງຄອກ ແລະ ນຳເອົາລ້ຽງໝູມາລ້ຽງໃນຄອກ ແລະ ມີການຮັກສາສຸຂະພາບສັດ ໂດຍການສັກຢາປ້ອງກັນ ແລະ ຂ້າແມ່ທ້ອງໃຫ້ໝູ



ມາຮອດປະຈຸບັນນີ້ ການປະສົມອາຫານໃຫ້ໝູຂອງລາວແຕກຕ່າງກັບເມື່ອກ່ອນຄື: ມີຖົ່ວສະໄຕໂລ, ມີໃບມັນດ້າງ ແລະ ໃບປໍສາ ວິທີການປະສົມອາຫານຂອງລາວມີສູດປະສົມດັ່ງນີ້:

- ຮຳ 6 ຖ້ວຍໃຫຍ່, ຖົ່ວສະໄຕໂລ 2 ຖ້ວຍ
- ໃບມັນດ້າງແລະໃບປໍສາ 3 ຖ້ວຍ, ເກືອ 1 ກຳມື
- ນ້ຳ ສະກັດຊີວະພາບ 1 ບ່ວງແກງ
- ໃຊ້ເກືອໝູ 4 ໂຕ/ຄາບ/ມື້ ເກືອ 3 ຄາບ/ມື້ ເຫັນວ່າໝູຂອງລາວກິນໄດ້ດີ ຕໍ່ມາແລ້ວກໍ່ເພີ່ມຖົ່ວສະໄຕໂລ ແລະ ໃບມັນດ້າງຂຶ້ນແນວລະຖ້ວຍ ແລະ ຫຼຸດຮຳລົງຈາກ 6 ຖ້ວຍມາເປັນ 5 ຖ້ວຍ ຄອບຄົວ ທ້າວ ສີວອນ ສາມາດແກ້ໄຂດ້ານອາຫານສັດໄດ້ ແລະ ເປັນຄອບຄົວທີ່ໄດ້ຮັບຜົນປະໂຫຍດ ຈາກການລ້ຽງໝູ .



## ຜົນທີ່ໄດ້ຮັບຈາກການປູກ ຖົ່ວສະໄຕ

- ບໍ່ໄດ້ໄປຊອກຫາຜັກຫຳມະຊາດໃນເມື່ອກ່ອນ
- ຫຼຸດຜ່ອນເງິນຊື້ຮຳລົງ
- ສາມາດລ້ຽງໝູເພີ່ມຂຶ້ນອີກ
- ໝູມີການຈະເລີນເຕີບໂຕໄວກວ່າເມື່ອກ່ອນ ໃຊ້ເວລາລ້ຽງໝູບໍ່ຫຼາຍເດືອນ, ຂາຍໄດ້ລາຄາດີ

ໃນປີ 2006 ລາວຊື້ໝູນ້ອຍເຂົ້າມາລ້ຽງ 7 ໂຕ ໃນລາຄາ 1,400,000 ກີບ ໃຊ້ເວລາລ້ຽງ 7 ເດືອນ ມີນ້ຳໜັກ 70 kg/ໂຕ ຂາຍທັງໝົດ 7 ໂຕ ໄດ້ເງິນທັງໝົດ 5,880,000 ກີບ.

ໃນປີ 2007 ລາວຊື້ໝູນ້ອຍເຂົ້າມາລ້ຽງຕື່ມ 9 ໂຕໃນລາຄາ 1,700,000 ກີບ ໃຊ້ເວລາລ້ຽງແຕ່ 8 ເດືອນ ມີນ້ຳໜັກ 75 kg/ໂຕ ຂາຍທັງໝົດ 8 ໂຕ ໄດ້ເງິນ ທັງໝົດ 8,100,000 ກີບ.

ໃນປີ 2008 ລາວຊື້ໝູເຂົ້າມາຕື່ມ 1 ແມ່ໃນລາຄາ 700,000 ກີບ ມາລ້ຽງເປັນແມ່ພັນ ຕໍ່ມາມັນໄດ້ເກີດ 8 ໂຕ ລາວໄດ້ລ້ຽງໝູນ້ອຍດັ່ງກ່າວ ໂດຍໃຊ້ເວລາລ້ຽງ 7 ເດືອນ ມີນ້ຳໜັກ 60 ກິໂລ/1ໂຕ ຂາຍທັງໝົດ 8 ໂຕ ໄດ້ເງິນທັງໝົດ 5,760,000 ກີບ

ປະຈຸບັນ ລາວຫລຸດຜ່ອນການເຮັດໄຮ່ ປູກເຂົ້າຫັນມາລ້ຽງໝູ ແລະ ປູກພືດເປັນສິນຄ້າ ເພື່ອສ້າງລາຍຮັບເພີ້ມໃຫ້ແກ່ຄອບຄົວ.

ມີສວນພືດອາຫານສັດເປັນຂອງຕົນເອງ, ຮູ້ວິທີການຮັກສາສຸຂະພາບ ແລະ ລະບົບການລ້ຽງສັດເຊັ່ນ: ສັກຢາປ້ອງກັນ, ຂ້າແມ່ທ້ອງໃຫ້ສັດລ້ຽງ.

ມີຄວາມສາມາດ ນຳເອົາບົດຮຽນຂອງຕົນເອງໄປອະທິບາຍໃຫ້ຜູ້ອື່ນໄດ້.

## ແຜນໃນອານາຄົດຂອງລາວ

- ເພີ້ມເນື້ອທີ່ປູກພືດອາຫານສັດໃຫ້ໄດ້ຕື່ມ ອີກປະມານ 0.5 ເຮັກຕາ ເພື່ອໃຫ້ພຽງພໍກັບການລ້ຽງໝູຫຼາຍໂຕ.
- ຈະຫັນເອົາອາຊີບລ້ຽງໝູເປັນອາຊີບຄົງທີ່
- ຈະຊື້ໝູເຂົ້າມາລ້ຽງຕື່ມອີກໃຫ້ໄດ້ຫຼາຍໂຕ.



*ຂຽນໂດຍ: ນາງ ສົມຈິດ ພະນັກງານ ຫ້ອງການກະສິກຳ ເມືອງ ໂພນໄຊ ແຂວງ ຫລວງພະບາງ*

*ໂທລະສັບ: 020 529 9209*

# ໂຄງການ ເຜີຍແຜ່ວິທີການທີ່ເໝາະສົມໃນ ການຂະຫຍາຍການລ້ຽງສັດ ໃນເຂດພາກເໜືອ ຂອງ ສປປ ລາວ



ຄອບຄົວທີ່ໄດ້ຮັບຜົນປະໂຫຍດຈາກການປູກ ຖົ່ວສະໄຕໂລລ້ຽງໝູ.

ຈັດຕັ້ງປະຕິບັດໂດຍ ກອງສົ່ງເສີມກະສິກໍາ ແລະ ປ່າໄມ້ ກະຊວງກະສິກໍາ ແລະ ປ່າໄມ້ ສ ປ ປ ລາວ

ທ້າວ ຄໍາຈັນ ເປັນຊາວກະສິກອນ ຄອບຄົວໜຶ່ງທີ່ດໍາລົງຊີວິດຢູ່ບ້ານດອນໄຊ, ເມືອງ ໂພນໄຊ ເປັນຊົນເຜົ່າຂະມຸ ຈໍານວນພົນໃນຄອບຄົວມີ 8 ຄົນ, ຍິງ 4 ຄົນ ມີແຮງງານຕົ້ນຕໍ 4 ຄົນ, ອາຊີບຕົ້ນຕໍ ແມ່ນເຮັດໄຮ່ປູກເຂົ້າຄຽງຄູ່ໄປກັບການລ້ຽງສັດ ໃນປະຈຸບັນຄອບຄົວຂອງລາວມີຄວາຍ 5 ໂຕ, ງົວ 4 ໂຕ, ແບ້ 16 ໂຕ, ໝູ 4 ໂຕ ແລະສັດປີກ 23 ໂຕ ການລ້ຽງສັດໃນເມື່ອກ່ອນ ລາວລ້ຽງປ່ອຍແບບທໍາມະຊາດ, ມີບັນຫາສັດເກີດພະຍາດ, ສັດຈ່ອຍຍ້ອນຂາດແຄນອາຫານ, ການໄປຊອກອາຫານທໍາມະຊາດແມ່ນຢູ່ໄກໃຊ້ເວລາໄປກັບ 2 ຊົ່ວໂມງ ແລະ ເສຍແຮງງານ 2 ຄົນ/ວັນ ຮໍາກໍ່ມີລາຄາແພງ, ໝູຈ່ອຍ, ລ້ຽງນານໃຫຍ່, ຂາຍໄດ້ລາຄາຕໍ່າ.

ດັ່ງນັ້ນ ເມື່ອມາຮອດປີ 2006 ລາວໄດ້ສະເໜີເຂົ້າມາຮ່ວມໂຄງການ ທົດລອງລະບົບການລ້ຽງສັດ ແລະ ສະເໜີປູກຖົ່ວສະໄຕໂລ ແລະ ມັນຕົ້ນເພື່ອແກ້ໄຂບັນຫາ



ການລ້ຽງສັດ, ລາວໄດ້ປູກພືດອາຫານສັດມີເນື້ອທີ່ 400 ຕາແມັດ ຫຼັງຈາກເຂົ້າຮ່ວມໂຄງການແລ້ວ ລາວກໍ່ມີວິທີການປັບປຸງ ລະບົບການລ້ຽງສັດ ຂອງລາວ ຈາກການລ້ຽງສັດແບບປະປ່ອຍ ຫັນມາລ້ຽງແບບໃສ່ຄອກຂັງ ແລະ ມາຮອດປະຈຸບັນນີ້ ການປະສົມອາຫານຂອງລາວ ແມ່ນແຕກຕ່າງກັບເມື່ອກ່ອນ ຄື: ມີສູດປະສົມອາຫານດັ່ງນີ້:

- ເອົາຮໍາ 6 ຖ້ວຍໃຫຍ່.
- ຖົ່ວສະໄຕໂລ 2 ຖ້ວຍ
- ໃບມັນຕົ້ນ 1 ຖ້ວຍ
- ເກືອ 1 ກໍາ.



ໃຊ້ເກືອໝູ 7 ໂຕ/ຄາບ/ໜຶ່ງມື້ ເກືອ 3 ຄາບ ໃນໄລຍະການລ້ຽງ ລາວສັງເກດເຫັນວ່າໝູຂອງລາວກິນດີ ແລະ ຈະເລີນເຕີບໂຕໄວ ຈາກນັ້ນມາ ລາວກໍ່ເພີ້ມ ຖົ່ວສະໄຕໂລ ແລະ ໃບມັນຕົ້ນຕື່ມ ຈາກ 2 ມາເປັນ 3 ຖ້ວຍ ແລະ ຫລຸດຮໍາລົງ ຄອບຄົວ ຂອງລາວສາມາດແກ້ໄຂບັນຫາເລັ້ຽງອາຫານໝູໄດ້ໂດຍພື້ນຖານ ໂດຍໄດ້ມີການປັບປຸງການໃຫ້ນໍ້າແບບມີກ໊ອກນໍ້າ ຢູ່ໃນຄອກເລີຍ.



## ຜົນປະໂຫຍດທີ່ໄດ້ຮັບຈາກການປູກຖົ່ວສະໄຕໂລ

- ບໍ່ໄດ້ໄປຊອກຫາຜັກທຳມະຊາດຄືແຕ່ກ່ອນ.
- ຫລຸດຜ່ອນຕົ້ນທຶນຊື້ຮຳ.
- ສາມາດລ້ຽງໝູເພີ້ມຂຶ້ນອີກ.
- ສັດມີການຈະເລີນເຕີບໂຕໄວກວ່າເມື່ອກ່ອນ.

## ຜົນທີ່ໄດ້ຮັບຈາກການລ້ຽງໝູ

ລາວຊື້ໝູມາລ້ຽງ ຊຸດທຳອິດ 4 ໂຕ ໃນລາຄາ 600,000 ກີບ 1 ໂຕ ມີນ້ຳໜັກ 15 ກິໂລ ມາລ້ຽງທອມ ໂດຍຈັດຕັ້ງປະຕິບັດ ຖືກຕ້ອງຕາມ ເຕັກນິກວິຊາການທີ່ໄດ້ແນະນຳ ແລະ ໃຊ້ເວລາລ້ຽງ 6 ເດືອນ ໝູມີນ້ຳໜັກ 65 ກິໂລ/ໂຕ, ໝູ 6 ໂຕ ມີນ້ຳໜັກລວມ 390 ກິໂລ ຂາຍໝູດິບ ໃນລາຄາ 12,000 ກີບ/ກິໂລ ແລະ ໄດ້ເງິນທັງໝົດແມ່ນ 4,680,000 ກີບ ຕໍ່ມາລາວ ເພີ້ມເນື້ອທີ່ສວນພືດອາຫານສັດຂຶ້ນຕື່ມ 500 ຕາແມັດ ລາວໄດ້ຊື້ໝູເຂົ້າມາທອມຊຸດທີ 2 ຈຳນວນ 6 ໂຕ ຊື້ໃນລາຄາ 900,000 ກີບ 1 ໂຕ ມີນ້ຳໜັກປະມານ 17 ກິໂລ ແລະ ໃຊ້ເວລາລ້ຽງ 6 ເດືອນກວ່າ ໝູມີນ້ຳໜັກເພີ່ມຂຶ້ນເຖິງ 70 ກິໂລ / 1ໂຕ ໃນ ຈຳນວນ 6 ໂຕ ມີນ້ຳໜັກລວມ 420 ກິໂລ ຂາຍເປັນເງິນ 5,040,000 ກີບ ເມື່ອຂາຍໝູອອກໝົດແລ້ວ ລາວກໍ່ຊື້ມາລ້ຽງຊຸດທີ 3 ອີກ ໃນຈຳນວນໝູ 5 ໂຕ ຊື້ໃນລາຄາ 1,000,000 ກີບ ມາລ້ຽງພາຍໃນ 5 ເດືອນ ພໍດີລູກຊາຍກິນ ລາວຢາກໄດ້ເນຍເລີຍເອົາໝູທີ່ລ້ຽງ ມາເຮັດດອງໃຫ້ລູກຊາຍ ຈຳນວນ 4 ໂຕ ສ່ວນໜຶ່ງໂຕ ແມ່ນຂາຍເອົາເງິນມາໃຊ້ໃນງານດອງ ໃນປະຈຸບັນລາວຫັນເອົາການລ້ຽງໝູເປັນການສ້າງລາຍ



ຮັບເພີ້ມໃຫ້ແກ່ຄອບຄົວ.

- ມີສວນພືດອາຫານສັດເປັນຂອງຕົນເອງ
- ມີການປັບປຸງຄອກສັດ (ຄອກໝູ)
- ມີປະສົບການໃນລະບົບການລ້ຽງສັດ
- ຮູ້ວິທີການຮັກສາສຸຂະພາບສັດ (ການປ້ອງກັນພະຍາດສັດ, ການຂ້າແມ່ທ້ອງ ແລະ ການໃຫ້ຢາວິຕະມິນ.
- ມີຄວາມສາມາດ ນຳເອົາບົດຮຽນ ຫຼື ປະສົບການທີ່ຕົນເອງໄດ້ເຮັດຜ່ານມາ ໄປອະທິບາຍ ຫຼື ໄປສາທິດສອນຕໍ່ໃຫ້ຊາວກະສິກອນຢູ່ພາຍໃນບ້ານ ແລະ ແຂກ ຕ່າງເມືອງ ຕ່າງແຂວງ ທີ່ມີໂອກາດມາຢ້ຽມຢາມ ຫຼື ມາທັດສະນະ ໄດ້ຢ່າງຈະແຈ້ງ.



### ແຜນອານາຄົດຂອງລາວ

-ເພີ້ມເນື້ອທີ່ສວນພືດອາຫານສັດອອກຕື່ມ.
- ຊື້ສັດເຂົ້າມາລ້ຽງໂດຍສະເພາະແມ່ນໝູ.
- ເຊົາເຮັດໄຮ່ຫັນມາລ້ຽງສັດເປັນອາຊີບຄົງທີ່.

ຂຽນໂດຍ: ນາງ ສົມຈິດ ພະນັກງານ
ຫ້ອງການກະສິກຳເມືອງ ໂພນໄຊ
ແຂວງ ຫລວງພະບາງ
ໂທລະສັບ 020 5299209